ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 17 ຫາ 21 ມີນາ 2025



ການນຳກະຊວງກະສິກຳ ແລະ ປ່າໄມ້ ຊຸກຍູ້ວຽກງານ ຢູ່ເມືອງ ນານ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ການນຳກະຊວງກະສິກຳ ແລະ ປ່າໄມ້ ຊຸກຍູ້ວຽກງານ ຢູ່ເມືອງນານ

ພາບ-ຂ່າວໂດຍ:ພະແນກ ໂຄສະນາ ແລະ ຂ່າວສານ

ໃນວັນທີ 11 ມີນານີ້, ທ່ານ ປອ ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວ ຊຸກຍູ້ ການຈັດຕັ້ງປະຕິບັດ ໂຄງການພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງ ແບບຍືນຍົງ, ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະ ໜາດນ້ອຍ ຢູ່ເມືອງນານ ແຂວງຫຼວງພະບາງ, ມີທ່ານ ນາງ ສີລິພອນ ສຸພັນທອງ ຮອງເຈົ້າແຂວງຫຼວງພະບາງ ພ້ອມດ້ວຍ ການນຳຂັ້ນແຂວງ-ເມືອງ, ທີມງານປະສານງານໂຄງການ ແລະ ກຸ່ມຊາວນາ ໃຫ້ການຕ້ອນຮັບ.

ການເຄື່ອນໄຫວຄັ້ງນີ້, ໄດ້ຢ້ຽມຢາມກິດຈະກຳພາກສະໜາມຂອງໂຄງການ ເປັນຕົ້ນ ລະບົບຊົນລະປະທານນ້ຳແສງ ຂອງໂຄງການພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງ ແບບຍືນຍົງ, ລວມທັງການປູກໝາກຖົ່ວດິນ ຂອງກຸ່ມຊາວນາບ້ານນາເຄີນ, ບ້ານທາດ ໂດຍການຊຸກຍູ້ຂອງໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ.

ໂອກາດນີ້, ທ່ານ ສົມຍາ ຊຸມພົນພັກດີ ຮອງຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ແຂວງ ທັງເປັນຜູ້ປະສານງານໂຄງການຂັ້ນແຂວງ ໄດ້ລາຍງານແຜນຜັງລວມ ຂອງໂຄງການພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງ ແບບຍືນຍົງ ໄດ້ເລີ່ມຈັດຕັ້ງປະຕິບັດມາແຕ່ ປີ 2019 ໂດຍສອດຄ່ອງຕາມສັນຍາກາລົງທຶນຂອງລັດ. ມາຮອດປັດຈຸບັນໄດ້ສຳເລັດກໍ່ສ້າງ ຊົນລະປະທານນ້ຳແສງ ແລະ ມອບຮັບຢ່າງເປັນທາງການ, ຊຶ່ງສາມາດສະໜອງນ້ຳຊົມໃຊ້ ຈຳນວນ 14 ບ້ານ ພາຍໃນເມືອງນານ. ຈາກນັ້ນ, ຕາງໜ້າໃຫ້ກຸ່ມປູກຖົ່ວດິນ ຂອງໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ ໄດລາຍງານສະພາບ



ລວມກຸ່ມປູກໝາກຖົ່ວດິນ ນັບແຕ່ປີ 2022 ປະກອບມີສະມາຊິກ 40 ຄອບຄົວ ໃນສອງບ້ານ ຄື: ບ້ານນາເຄີນ ແລະ ບ້ານທາດ, ຜ່ານການປູກໝາກຖົ່ວດິນ ຮອບວຽນ 1 ແລະຮອບວຽນ 2 ມີເນື້ອທີ່ລວມທັງໝົດ 13 ເຮັກຕາກວ່າ, ໄດ້ຮັບຜົນຜະລິດຫຼາຍກວ່າ 52 ໂຕນ, ຂາຍໄດ້ເປັນເງິນທັງໝົດ 545 ລ້ານກວ່າກີບ. ໂດຍມີສິ່ງອຳນວຍຄວາມສະດວກໃຫ້ແກ່ກຸ່ມຜະລິດ ມີລະບົບນ້ຳບາດານ, ໃຊ້ໄຟຟ້າແສງຕາເວັນ, ມີອຸ່ງເກັບນ້ຳ ແລະຝາຍນ້ຳລົ້ນ, ມີລະບົບກອງທຶນກຸ່ມຜະລິດ ໂດຍເກັບເງິນຈາກສະມາຊິກກຸ່ມຫຼັງຈາກຂາຍຜົນຜະລິດ 100.000 ກີບ ຕໍ່ຄອບຄົວຕໍ່ປີ, ປັດຈຸບັນມີເງິນກອງທຶນກຸ່ມຜະລິດມີ 6.000.000 ກີບ, ພາຍຫຼັງໄດ້ຮັບໂຄງການຊ່ວຍເຫຼືອ ເຮັດໃຫ້ຊີວິດການເປັນຢູ່ ຂອງຊາວກະສິກອນເມືອງນານມີການພັດທະນາດີຂຶ້ນ. ຕອນທ້າຍ ທ່ານ ປອ ລິນຄຳ ດວງສະຫວັນ ໄດ້ເນັ້ນໃຫ້ທຸກພາກສ່ວນ ສືບຕໍ່ພັດທະນາບັນດາວຽກງານທີ່ກ່ຽວຂ້ອງ, ເພື່ອອຳນວຍຄວາມສະດວກໃຫ້ແກ່ຊາວກະສິກອນຜູ້ຜະລິດ, ລວມທັງບັນດາຫົວໜ່ວຍທຸລະກິດ ໃນການເກັບຊື້ຜົນຜະລິດ ແລະ ການສະໜອງນ້ຳຊົນລະປະທານ ສູ່ການຜະລິດກະສິກຳຂອງຊາວກະສິກອນ ຢ່າງພຽງພໍ ໃນເຂດເປົ້າໝາຍ ແລະ ໃຫ້ຄອບຄົວເປົ້າໝາຍ ໄດ້ເຂົ້າເຖິງການຊົມໃຊ້ ມີຜົນປະໂຫຍດສູງສຸດ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ຂຶ້ນດີກວ່າເກົ່າ

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
YouTube Youtube: ລາຍການກະສິກຳ;ແລະ ປ່າໄມ້;